ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງສາລະວັນ

ເລກທີ 09..../ຈຂ.ສວ

ສາລະວັນ, ວັນທີ 15...6...2023

# ແຈ້ງການ

**ເຖິງ:** - ທ່ານ ເຈົ້າເມືອງ 8 ເມືອງ

- ທ່ານ ຫົວໜ້າພະແນກການຂອງແຂວງ, ອົງການທຽບເທົ່າອ້ອມຂ້າງແຂວງ
- ຫົວໜ່ວຍຜູ້ປະກອບການ, ທຸລະກິດ ທົ່ວແຂວງສາລະວັນ

**ເລື່ອງ:** ການຄຸ້ມຄອງ ສື່ສັງຄົມອອນລາຍ ທົ່ວແຂວງສາລະວັນ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍ ວ່າດ້ວຍ ສື່ມວນຊົນ ສະບັບເລກທີ 01/ສພຊ, ລົງວັນທີ 4 ພະຈິກ 2016.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ເລກທີ 691/ຫສນຍ, ລົງວັນທີ 27 ເມສາ 2023.
- ອີງຕາມ ໜັງສືສະເໜີຂອງພະແນກຖະແຫຼງຂ່າວ, ວັດທະນະທຳແລະທ່ອງທ່ຽວແຂວງ, ສະບັບເລກທີ 291/ຖວທ.ສວ, ລົງວັນທີ 25 ພຶດສະພາ 2023

ເພື່ອເປັນການຜັນຂະຫຍາຍເນື້ອໃນແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ວ່າດ້ວຍ ການຕິດຕາມ ແລະ ແກ້ໄຂບັນຫາທີ່ພົ້ນເດັ່ນ ໃນສື່ສັງຄົມອອນລາຍ ໃນປະຈຸບັນ ແລະ ເຮັດໃຫ້ວຽກງານການໂຄສະນາຜ່ານສື່ສັງຄົມອອນລາຍ ກໍຄື ການສ້າງຕັ້ງໜ້າຂ່າວ ເຟສບຸກ (facebook), ຢູທູບ (youtube) ທີ່ເຮັດໜ້າທີ່ບໍລິການຂ່າວ ແລະ ສະໜອງຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ເປັນຈິງ, ໜ້າເຊື່ອຖື ແລະ ເປັນປະໂຫຍດຕໍ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

**ເຈົ້າແຂວງສາລະວັນ ອອກແຈ້ງການ:**

1. ໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຂອງພາກລັດ ແລະ ເອກະຊົນທີ່ສ້າງໜ້າຂ່າວອອນລາຍແລ້ວ ແລະ ກຳລັງຈະສ້າງ ເພື່ອບໍລິການຂ່າວ ແລະ ສະໜອງຂໍ້ມູນຂ່າວສານໃຫ້ແກ່ສັງຄົມ, ຕ້ອງໄດ້ລົງທະບຽນນຳ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ ຢ່າງຖືກຕ້ອງ ຈຶ່ງສາມາດເຄື່ອນໄຫວໄດ້.

2. ຫ້າມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຂອງພາກລັດ ແລະ ເອກະຊົນເຄື່ອນໄຫວໂຄສະນາ ແລະ ເຜີຍແຜ່ຂໍ້ມູນຂ່າວສານຜ່ານສື່ອອນລາຍ ໂດຍທີ່ຍັງບໍ່ທັນໄດ້ຮັບອະນຸຍາດຢ່າງຖືກຕ້ອງກົດໝາຍ ວ່າດ້ວຍສື່ມວນຊົນ ສະບັບເລກທີ 01/ສພຊ, ລົງວັນທີ 4 ພະຈິກ 2016 ມາດຕາ 60.

3. ຖ້າບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຂອງພາກລັດ ແລະ ເອກະຊົນ ຍັງສືບຕໍ່ເຄື່ອນໄຫວໂຄສະນາ ແລະ ສະໜອງຂໍ້ມູນຂ່າວສານ ຜ່ານສື່ອອນລາຍ ໃຫ້ແກ່ສັງຄົມ ໂດຍບໍ່ໄດ້ຮັບອະນຸຍາດ ແມ່ນຈະໄດ້ດຳເນີນມາດຕະການຕາມ ກົດໝາຍ ວ່າດ້ວຍສື່ມວນຊົນ ສະບັບເລກທີ 01/ສພຊ, ລົງວັນທີ 4 ພະຈິກ 2016 ມາດຕາ 83.

4. ມອບໃຫ້ອົງການປົກຄອງເມືອງ, ພະແນກການ - ອົງການທຽບເທົ່າອ້ອມຂ້າງແຂວງ, ບຸກຄົນ, ນິຕິ ບຸກຄົນ, ເອກະຊົນ ແລະ ບັນດາຫົວໜ່ວຍຜູ້ປະກອບການ, ທຸລະກິດ ໃນທົ່ວແຂວງສາລະວັນ ເປັນເຈົ້າການ ເອົາໃຈໃສ່ ເຜີຍແຜ່

ແຈ້ງການ ແລະ ແນະນຳໃຫ້ພະນັກງານ-ລັດຖະກອນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຂອງພາກລັດ ແລະ ເອກະຊົນທຸກຂັ້ນຂຶ້ນມາພົວພັນເພື່ອຂຶ້ນທະບຽນນຳ ພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງສາລະວັນ.

5. ມອບໃຫ້ພະແນກຖະແຫຼງຂ່າວ,ວັດທະນະທຳ ແລະທ່ອງທ່ຽວແຂວງສາລະວັນ ເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເຮັດໜ້າທີ່ ຄຸ້ມຄອງ, ບຸກຄົນ, ນິຕິບຸກຄົນ, ເອກະຊົນ ແລະ ບັນດາຫົວໜ່ວຍຜູ້ປະກອບການ, ທຸລະກິດ ກ່ຽວກັບການໂຄສະນາເຜີຍແຜ່ ຫຼື ສະໜອງຂໍ້ມູນຂ່າວສານ ໃຫ້ແກ່ສັງຄົມຜ່ານສື່ອອນລາຍ ທາງໜ້າເຟສບຸກ (facebook) ຫຼື ຢູທູບ (youtube) ຢ່າງເຂັ້ມງວດ.

6. ສາມາດດາວໂຫຼດແບບຟອມລົງທະບຽນ ນຳເວັບໄຊ **www.medielaos.com** ຫຼື ເອົາຢູ່ພະແນກຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວແຂວງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ

**ເຈົ້າແຂວງ**

**ບ່ອນນຳສົ່ງ:**
- ພາກສ່ວນກ່ຽວຂ້ອງ ລະ 01 ສະບັບ
- ເກັບຮັກສາໄວ້ 01 ສະບັບ

ແຂວງ ສາລະວັນ ເຈົ້າ ແຂວງ

ປອ. ດາວວົງ ພອນແກ້ວ